# ການເລີ່ມຕົ້ນໃນການສ້າງທຸກສິ່ງຢ່າງ.

ກ່ອນການເລີ່ມຕົ້ນຂອງເວລາ, ບໍ່ມີຕົ້ນໄມ້, ບໍ່ມີພູເຂົາແລະບໍ່ມີທ້ອງຟ້າ, ມີແຕ່ພະເຈົ້າຢູ່ທີ່ນັ້ນ. ພະອົງໄດ້ບອກພວກເຮົາໃນສິ່ງທີ່ເກີດຂຶ້ນໄວ້ໃນປຶ້ມພະຄຳພີຂອງພະອົງ.

ພະອົງໄດ້ສ້າງສະຫວັນແລະແຜ່ນດິນໂລກຂຶ້ນ. ໂດຍປັດສະຈາກວັດຖຸຕ່າງໆ. ແຕ່ວ່າແຜ່ນດິນໂລກນີ້ບໍ່ມີຮູບຮ່າງມັນເປັນສິ່ງເປົ່າຫວ່າງ. ພ້ອມດຽວກັນພະເຈົ້າໄດ້ເວົ້າວ່າ, "ຂໍໃຫ້ມີແສງສະຫວ່າງເກີດຂຶ້ນ." ແລະແສງສະຫວ່າງກໍ່ໄດ້ມີຂຶ້ນ. ທ່ານໄດ້ເຫັນວ່າພະເຈົ້າໄດ້ມີອຳນາດແລະໃຊ້ຄຳເວົ້າອັນສັກສິດຂອງພະອົງສ້າງທຸກສິ່ງຢ່າງທີ່ເຮົາໄດ້ເຫັນຢູ່ໃນສະຫວັນແລະເທິງແຜ່ນດິນໂລກນີ້.

ພະເຈົ້າໄດ້ສ້າງທຸກສິ່ງຢ່າງໃນຫົກວັນ, ຖືກແລ້ວ, ພະອົງບໍ່ໄດ້ໃຊ້ເວລາສ້າງເຖິງລ້ານປີ. ຄຳສອນຂອງພະເຈົ້າແມ່ນພະຄຳພີ, ເມື່ອພວກເຮົາໄດ້ອ່ານພະຄຳພີແລ້ວມັນໄດ້ແຈ້ງໃນການສ້າງຫົກວັນນັ້ນ, ຄືນີ້ແລງຜ່ານໄປ, ມື້ເຊົ້າກ່າວມາເປັນມື້ທຳອິດ. ມັນໄດ້ບອກໄວ້ອີກວ່າເຊັ່ນມື້ທີສອງ, ມື້ທີສາມ, ຈົນຮອດມື້ທີຫົກ ແຕ່ລະມື້ພະເຈົ້າໄດ້ເວົ້າວ່າ, "ຂໍໃຫ້ມັນມີຂຶ້ນ" ແລະດ້ວຍຄຳເວົ້າອັນສັກສິດຂອງພະອົງຈຶ່ງໄດ້ມີແສງສະຫວ່າງເກີດຂຶ້ນ, ທ້ອງຟ້າ, ຕາເວັນ, ເດືອນແລະດາວ, ແຜ່ນດິນ, ສັດລ້ຽງແລະສັດປ່າ, ຕົ້ນໄມ້ແລະພືດພັນຕ່າງໆ, ທະເລແລະແມ່ນ້ຳ, ປາແລະສັດຕ່າງໆ, ໄດ້ມີລາຍລະອຽດຢ່າງແນ່ນອນໃນທຸກສິ່ງທີ່ພະເຈົ້າໄດ້ສ້າງຂຶ້ນມາ.

ແຕ່ວ່າສິ່ງທີ່ສ້າງຂຶ້ນໃຫ້ເຫັນພິເສດສຸດໃນຫົກມື້ນັ້ນ, ແມ່ນມະນຸດຜູ້ຊາຍ, ແລະຜູ້ຍິງ, ຜູ້ຊາຍແລະຜູ້ຍິງມີເຫດຜົນພິເສດຫລາຍໆຢ່າງ. ອາດາມ, ເປັນມະນຸດຜູ້ຊາຍຜູ້ທຳອິດ, ໄດ້ຖືກສ້າງຂຶ້ນມາຈາກຂີ້ດິນດ້ວຍພະເຈົ້າ. ແລະມະນຸດຜູ້ຍິງຜູ້ທຳອິດ, ແມ່ນເອວາ, ສ້າງຂຶ້ນດ້ວຍພະເຈົ້າຈາກກະດູກຂ້າງຂອງອາດາມ. ເປັນຄວາມຈິງທີ່ພວກເຂົາໄດ້ຖືກສ້າງຂຶ້ນໂດຍພິເສດ.

ຜູ້ຊາຍມີຄວາມຫມາຍພິເສດແລະສຳຄັນເພາະວ່າເຂົາຖືກສ້າງຂຶ້ນມາໃຫ້ຄືກັບພະເຈົ້າ. ແຕ່ບໍ່ຫມາຍຄວາມວ່າຜູ້ຊາຍຈະຄືກັບພະເຈົ້າ. ຜູ້ຊາຍບໍ່ສາມາດຄືກັບພະເຈົ້າໄດ້ເພາະວ່າພະເຈົ້າເປັນພຽງຈິດວິນຍານເທົ່ານັ້ນ. ພະເຈົ້າບໍ່ໄດ້ມີຮູບຮ່າງແລະກະດູກເຫມືອນມະນຸດຂອງເຮົາ. ການຖືກສ້າງຂຶ້ນມາໃຫ້ຄືກັບພະເຈົ້າຫມາຍຄວາມວ່າຜູ້ຊາຍນັ້ນໄດ້ຖືກສ້າງຂຶ້ນມາຢ່າງສົມບູນເຫມືອນພະເຈົ້າ. ປັດສະຈາກຄວາມຜິດບາບແລະຄວາມຮັບສົມບູນຂອງພະເຈົ້າ. ຄວາມຈິງແລ້ວເມື່ອພະເຈົ້າໄດ້ສຳເລັດໃນການສ້າງທຸກສິ່ງຢ່າງຂອງພະອົງແລ້ວ. ພະອົງໄດ້ກ່າວວ່າທຸກສິ່ງຢ່າງທັງຫມົດນີ້ເປັນທີ່ພໍພະໄທຂອງພະອົງແລະມີຄວາມສວຍງາມຫລາຍ.

ໃນການເພີ່ມເຕີມທາງດ້ານຮ່າງກາຍ, ພະເຈົ້າໄດ້ໃຫ້ມະນຸດຜູ້ຊາຍແລະຜູ້ຍິງມີຈິດວິນຍານ. ພຽງແຕ່ມະນຸດເທົ່ານັ້ນທີ່ພະເຈົ້າໄດ້ໃຫ້ທັງຮ່າງກາຍແລະຈິດວິນຍານ. ບໍ່ມີສິ່ງອື່ນໃດທີ່ເພິ່ນສ້າງຂຶ້ນມີຈິດວິນຍານ. ນອກຈາກທີ່ສ້າງຂຶ້ນພິເສດແລະສ້າງໃຫ້ຄ້າຍຄືກັບພະເຈົ້າແລ້ວ. ມະນຸດຜູ້ຊາຍຍັງເປັນຜູ້ດູແລຄອງແຜ່ນດິນໂລກແລະທຸກສິ່ງຢ່າງທີ່ຢູ່ໃນໂລກນັ້ນ, ລາວໄດ້ດູແລຄອງປາຢູ່ໃນທະເລ, ນົກຢູ່ເທິງອາກາດ, ສັດລ້ຽງສັດປ່າແລະທຸກສິ່ງຢ່າງທີ່ມີການເໜັງຕີງຢູ່ໃນໂລກນີ້. ມັນເປັນໜ້າທີ່ຮັບຜິດຊອບອັນສຳຄັນທີ່ພະອົງໄດ້ມອບໃຫ້ແກ່ມະນຸດ.

ແຕ່ວ່າປັດຈຸບັນນີ້, ຍ້ອນຄວາມຜິດບາບມະນຸດບໍ່ໄດ້ຮັກສາໃນສິ່ງທີ່ພະເຈົ້າໄດ້ສ້າງຂຶ້ນມາໃຫ້ເໝືອນດັ່ງມັນໄດ້ເປັນມາ. ເຮົາໄດ້ທຳລາຍຄວາມສວຍງາມຂອງໂລກທີ່ພະເຈົ້າໄດ້ສ້າງຂຶ້ນມາ. ພວກເຮົາໄດ້ເຮັດໃຫ້ອາກາດມີຄວາມເປື້ອນດ້ວຍຄວັນແລະກິ່ນບໍ່ດີ. ພວກເຮົາໄດ້ເຮັດໃຫ້ແມ່ນ້ຳມີຄວາມເປື້ອນ, ພວກເຮົາໄດ້ຖິ້ມເສດຕ່າງໆໃສ່ຕາມຕົວເມືອງແລະນອກເມືອງ, ພວກເຮົາໄດ້ຂ້າສັດປ່າແລະຕັດຕົ້ນໄມ້ໂດຍປັດສະຈາກການປູກເພີ່ມ.

ພວກເຮົາບໍ່ໄດ້ຮັກສາສິ່ງທີ່ພະເຈົ້າໄດ້ສ້າງຂຶ້ນເໝືອນດັ່ງພວກເຮົາຄວນຈະປະຕິບັດ. ໂລກຂອງພວກເຮົາບໍ່ມີຄວາມສວຍງາມເໝືອນດັ່ງພະເຈົ້າໄດ້ສ້າງຂຶ້ນໄວ້ດີເມື່ອກ່ອນອີກແລ້ວ. ພ້ອມດຽວກັນພວກເຮົາຍັງບໍ່ໄດ້ຮັບຜິດຊອບຮັກສາຮ່າງກາຍຂອງພວກເຮົາເອງ. ພວກເຮົາທຳລາຍຮ່າງກາຍຂອງພວກເຮົາເມື່ອເວລາເຮົາກິນສິ່ງບໍ່ດີ, ດື່ມເຫຼົ້າຫຼືສູບຢາ, ພວກເຮົາທຳລາຍຮ່າງກາຍຂອງພວກເຮົາເມື່ອເວລາພວກເຮົາໃຊ້ຢາເສບຕິດ.

ພວກເຮົາບໍ່ມີຄວາມສົມບູນເໝືອນດັ່ງພະເຈົ້າໄດ້ສ້າງເຮົາຂຶ້ນມາ. ແທນທີ່ຈະທຳລາຍຮ່າງກາຍຂອງເຮົາແລະໂລກນີ້. ພວກເຮົາຄວນຂອບພະຄຸນຕໍ່ພະອົງ. ສຳລັບສຸກຂະພາບແລະຮ່າງກາຍຂອງພວກເຮົາ. ພວກເຮົາຄວນຮັກສາຮ່າງກາຍຂອງພວກເຮົາໃຫ້ດີ. ພວກເຮົາຄວນສັນລະເສີນພະເຈົ້າເພາະວ່າພວກເຮົາໄດ້ຖືກສ້າງຂຶ້ນມາດ້ວຍຄວາມດີແລະຄວາມນັບຖືອັນສູງສົ່ງ. ບໍ່ມີສິ່ງໃດສາມາດມີແນວຄິດເໝືອນພວກເຮົາ, ບໍ່ມີສິ່ງໃດສາມາດໃຊ້ມືຂອງມັນເໝືອນພວກເຮົາໄດ້. ບໍ່ມີສິ່ງໃດມີຈິດວິນຍານເໝືອນພວກເຮົາອີກດ້ວຍ.

ຈິດວິນຍານນັ້ນແມ່ນຂອງຂວັນມາຈາກພະເຈົ້າ. ໂດຍຜ່ານທາງຄວາມເຊື່ອໃນພະເຢຊູຄຣິດເຈົ້າ. ພະບຸດຂອງພະເຈົ້າ, ຈິດວິນຍານຂອງເຮົານັ້ນຈະຖືກສົ່ງຄືນໄປຫາພະເຈົ້າຜູ້ທີ່ໄດ້ໃຫ້ເຮົາມາ. ຂໍໃຫ້ພວກເຮົາຈົ່ງໃຊ້ສຽງຮ້ອງຂອງພວກເຮົາໃນການສັນລະເສີນພະເຈົ້າໂດຍເວົ້າວ່າ, "ໂອ່ຂອບພະຄຸນຕໍ່ພະອົງສຳລັບຄຸນງາມຄວາມດີຂອງພະອົງ."

ສຳລັບການຮຽນຕໍ່ໄປໃຫ້ອ່ານບົດປະຖົມການ.

[illegible]